ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----------000----------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 57 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 17-05-2004

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການຮັບຮອງເອົານະໂຍບາຍລາຄານ້ຳປະປາ ຂອງ ສປປ ລາວ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06/05/2003.
- ອີງຕາມ ເອກະສານ ສະເໜີ ສະບັບເລກທີ 1924/ຄຂປກ, ລົງວັນທີ 17/02/2004 ຂອງທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງ ຄຂປກ.

### ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1:** ຮັບຮອງເອົານະໂຍບາຍລາຄານ້ຳປະປາ ຂອງ ສປປ ລາວ ຕາມສະບັບທີ່ລັດຖະມົນຕີວ່າການ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ໄດ້ລົງລາຍເຊັນຄັ້ງວັນທີ 26 ເມສາ 2004.

**ມາດຕາ 2:** ມອບໃຫ້ ກະຊວງ ຄຂປກ ສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດ ນະໂຍບາຍລາຄານ້ຳປະປາ ດັ່ງກ່າວ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 3:** ບັນດາ ກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫຼວງວຽງຈັນ, ເຂດພິເສດ ແລະ ພາກສ່ວນທີ່ ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4:** ດຳລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ກຳນົດ ແລະ ລະບຽບການຕ່າງ ໆ ທີ່ຂັດກັບເນື້ອໃນຂອງດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ